# ບົດສັງເຂບດ້ານນະໂຍບາຍ
# ການແກ້ໄຂຜົນກະທົບຈາກການສິ້ນສຸດໂກຕ້າ ສຳລັບການສົ່ງອອກ ແລະ ນຳເຂົ້າ ຜະລິດຕະພັນ ແຜ່ນແພ  ແລະ ເຄື່ອງນຸ່ງຫົ່ມ ຕໍ່ ສປປ ລາວ



## ການຂະຫຍາຍຂອບເຂດການຜະລິດ ແລະ ການສ້າງມູນຄ່າເພີ່ມໃນຂະແໜງ: ທ່ອງທ່ຽວ, ຫັດຖະກຳ ແລະ ປຸງແຕ່ງອາຫານ

*ການສ້າງຄວາມຫຼາກຫຼາຍໃນອຸດສາຫະກຳຂອງປະເທດ ແມ່ນອົງປະກອບສຳຄັນເພື່ອການພັດທະນາເສດຖະກິດໃຫ້ໝັ້ນທ່ຽງ ແລະ ເຂັ້ມແຂງເພື່ອຮອງຮັບອັດຕາສ່ວນຂອງກຳລັງແຮງງານທີ່ເພີ່ມຂຶ້ນ.  ອຸດສາຫະກຳຂອງປະເທດທີ່ມີຄວາມຫຼາກຫຼາຍເພີ່ມຂຶ້ນ  ຈະສ້າງກາລະໂອກາດ ແລະ ຟື້ນຕົວຈາກການກະທົບຈາກການແຂ່ງຂັນ, ລາຄາຕົກຕ່ຳ ເນື່ອງຈາກການສະໜອງທີ່ເຫຼືອ ແລະ ອື່ນໆ. ໃນການວິໄຈທີ່ປະສົມປະສານກ່ຽວກັບທ່າແຮງຂອງຕະຫຼາດ ແລະ ຜົນກະທົບຕໍ່ການພັດທະນາມະນຸດຂອງຫຼາຍຂະແໜງ, ໄດ້ກຳນົດຂະແໜງທີ່ຄົບເງື່ອນໄຂເຫຼົ່ານີ້ 3 ຂະແໜງຄື: ທ່ອງທ່ຽວ, ຫັດຖະກຳ ແລະ ປຸ່ງແຕ່ງອາຫານ.*

## ຜົນກະທົບຂອງຂະແໜງທ່ອງທ່ຽວ ຕໍ່ການພັດທະນາເສດຖະກິດ ແລະ ການພັດທະນາມະນຸດ

ການທ່ອງທ່ຽວ  ກຳລັງເປັນສ່ວນປະກອບອັນສຳຄັນ  ຕໍ່ການພັດທະນາເສດຖະກິດ-ສັງຄົມ ໃນ ສປປ ລາວ. ຂະແໜງນີ້ ໄດ້ຮັບການເອົາໃຈໃສ່  ແລະ  ສົ່ງເສີມຢ່າງຫຼວງຫຼາຍຈາກລັດຖະບານ ເຊັ່ນ: ການສົ່ງເສີມ "ປີທ່ອງທ່ຽວລາວ" ໃນປີ 1999; ພ້ອມທັງໄດ້ມີການວາງ ແລະ ພັດທະນາຍຸດທະສາດພັດທະນາການທ່ອງທ່ຽວຢ່າງຮອບຄອບ.  ການສຶກສາສະແດງໃຫ້ເຫັນວ່າ  ການປະກອບສ່ວນອັນສຳຄັນຂອງ  ຂະແໜງທ່ອງທ່ຽວຕໍ່ການພັດທະນາເສດຖະກິດ ແມ່ນເຫັນໄດ້ ໃນຂົງເຂດລຸ່ມນີ້:

- ການສົ່ງເສີມການລົງທຶນພາຍໃນ  ທາງກົງ  ແລະ  ທາງອ້ອມ ໃນສິ່ງອຳນວຍຄວາມສະດວກດ້ານທ່ອງທ່ຽວ;
- ການປັບປຸງທາງອ້ອມໃນພື້ນຖານໂຄງລ່າງ  ເຊັ່ນ: ຖະໜົນຫົນທາງ, ສະໜາມບິນ, ທ່າເຮືອ, ລະບົບໂທລະຄົມມະນາຄົມ, ໄຟຟ້າ, ນ້ຳປະປາ ແລະ ອື່ນໆ;
- ການສ້າງວຽກເຮັດງານທຳ ທາງກົງ ແລະ ທາງອ້ອມ;
- ການສ້າງລາຍຮັບຈາກການສົ່ງອອກ;
- ການແຈກຢາຍລາຍໄດ້ສູ່ທ້ອງຖິ່ນ ແລະ ຊົນນະບົດ;

ການທ່ອງທ່ຽວແມ່ນໜຶ່ງໃນບັນດາຂະແໜງຕົ້ນຕໍ  ທີ່ມີບົດບາດສຳຄັນຕໍ່ການສ້າງວຽກເຮັດງານທຳ ແລະ ການພັດທະນາເສດຖະກິດໃນປະເທດ.  ການເພີ່ມຂຶ້ນຂອງຈຳນວນນັກທ່ອງທ່ຽວ,  ລາຍຮັບຈາກອຸດສາຫະກຳທ່ອງທ່ຽວ  ກວມເອົາ  ປະມານ  7%  ຂອງຍອດລວມຜະລິດຕະພັນແຫ່ງຊາດ  ໃນປີ  2004  ແລະ  ໄດ້ສືບຕໍ່ຂະຫຍາຍຕົວໃນຊຸມປີຜ່ານມາ. ລາຍຮັບແຫ່ງຊາດທີ່ເກີດຈາກຂະແໜງທ່ອງທ່ຽວ  ໄດ້ເພີ່ມທະວີຂຶ້ນຈາກ  2.25  ລ້ານໂດລາໃນປີ 1991 ເປັນ 147 ລ້ານໂດລາໃນປີ 2005. ອຸດສາຫະກຳນີ້ ສາມາດເປັນແຫຼ່ງສ້າງລາຍຮັບໃຫ້ແກ່ຄົນລາວ  ເປັນຈຳນວນຫຼວງຫຼາຍ.

ປະຈຸບັນ, ຂະແໜງທ່ອງທ່ຽວ ສ້າງວຽກເຮັດງານທຳທາງກົງ ປະມານ 37,000 ຄົນ ໃນຂະແໜງບໍລິການທ່ອງທ່ຽວ (ໂຮງແຮມ, ຮ້ານອາຫານ, ຜັບບາ), ຂະແໜງຄ້າຍ່ອຍ (ຮ້ານເຄື່ອງທີ່ລະນຶກ ແລະ ຫັດຖະກຳ), ທຸລະກິດທ່ອງທ່ຽວ ແລະ ນຳທ່ຽວ, ແລະ ຂະແໜງຂົນສົ່ງ.

ການເຊື່ອມໂຍງ  ລະຫວ່າງຂະແໜງການໃນປະເທດ  ກັບອຸດສາຫະກຳທ່ອງທ່ຽວ ແມ່ນມີສູງ ຊຶ່ງຂະແໜງທ່ອງທ່ຽວສ້າງ (ຫຼື ສະໜັບສະໜູນ) ການສ້າງວຽກເຮັດງານທຳທາງອ້ອມ 630,000 ຄົນ ໂດຍຜ່ານການສະໜອງສິນຄ້າ  ແລະ  ການບໍລິການ  ທີ່ຈຳເປັນສຳລັບທຸລະກິດທີ່ຕິດພັນກັບການທ່ອງທ່ຽວ.  ຂະແໜງທ່ອງທ່ຽວໄດ້ສ້າງຮູບຮ່າງລະບົບເສດຖະກິດ  ຢ່າງຫຼວງຫຼາຍໂດຍຜ່ານການພັດທະນາທຸລະກິດ ໃນຫຼາຍຂະແໜງ ແລະ ການປັບປຸງພື້ນຖານໂຄງລ່າງ  ແລະ  ສິ່ງອຳນວຍຄວາມສະດວກສາທາລະນະ.  ຂະແໜງທ່ອງທ່ຽວຍັງປະກອບສ່ວນໃນການຫຼຸດຜ່ອນຄວາມທຸກຍາກໃນບາງຊຸມຊົນທ້ອງຖິ່ນ  ໂດຍຜ່ານການມີຄວາມສ່ວນຮ່ວມ  ໃນກິດຈະກຳທ່ອງທ່ຽວແບບອະນຸຮັກ ເຊັ່ນ: ເຮືອນໃຫ້ພັກ, ການນຳທ່ຽວ, ແລະ ການຂາຍເຄື່ອງຫັດຖະກຳ. ການທ່ອງທ່ຽວປະເພດນີ້

ການສຶກສານີ້ ດຳເນີນໂດຍ ສູນສະຖິຕິແຫ່ງຊາດ ພາຍໃຕ້ການສະໜັບສະໜູນຂອງອົງການສະຫະປະຊາຊາດ
ເພື່ອການພັດທະນາລະດັບ ພາກພື້ນ ປະຈຳ ໂຄລົມໂບ.

ເພີ່ມທະວີການພົວພັນໃຫ້ສະໜິດແໜ້ນຂຶ້ນລະຫວ່າງ ນັກທ່ອງທ່ຽວ ແລະ ຊຸມຊົນທ້ອງຖິ່ນ.

**ການປະກອບສ່ວນຕໍ່ລະບົບເສດຖະກິດ:**

ເນື່ອງຈາກເປັນຂະແໜງ ທີ່ສ້າງລາຍຮັບສູງສຸດຂອງປະເທດ, ຂະແໜງທ່ອງທ່ຽວ ໄດ້ຮັບການເອົາໃຈໃສ່ຈາກຜູ້ມີສ່ວນຮ່ວມຫຼາຍພາກສ່ວນ. ຂະແໜງທ່ອງທ່ຽວ ເປັນກິດຈະກຳເສດຖະກິດທີ່ມີຂອບເຂດກວ້າງ ແລະ ຜູ້ມີສ່ວນຮ່ວມ ໄດ້ກາຍເປັນຜູ້ປະກອບສ່ວນສຳຄັນ ທີ່ມີອິດທິພົນ ແລະ ສະໜັບສະໜູນອຸດສາຫະກຳທ່ອງທ່ຽວ. ໃນຂັ້ນສູນກາງ, ຜູ້ປະກອບສ່ວນສຳຄັນ ໃນຂະແໜງທ່ອງທ່ຽວປະກອບດ້ວຍ ກົມກອງ ແລະ ກະຊວງຕ່າງໆ. ໃນຂັ້ນແຂວງ ແລະ ນະຄອນຫຼວງ, ຍັງມີພະແນກ ແລະ ຫ້ອງການທີ່ຕິດພັນກັບການທ່ອງທ່ຽວ ຊຶ່ງຄຸ້ມຄອງ ແລະ ສົ່ງເສີມອຸດສາຫະກຳທ່ອງທ່ຽວ. ນອກຈາກນັ້ນ, ອົງການຈັດຕັ້ງສາກົນຍັງສະໜັບສະໜູນ, ສະໜອງ ແຫຼ່ງທຶນ ແລະ ສ້າງຕັ້ງໂຄງການສະໜັບສະໜູນການທ່ອງທ່ຽວ ເພື່ອການຮ່ວມມືກັບໜ່ວຍງານຂອງລັດຖະບານທີ່ກ່ຽວຂ້ອງ.

**ຂໍ້ຈຳກັດ:**

ອຸດສາຫະກຳດັ່ງກ່າວ ປະເຊີນກັບບາງຂໍ້ຈຳກັດ ຈາກທັງທາງດ້ານອຸປະສົງ ແລະ ອຸປະທານ. ສຳລັບ ດ້ານອຸປະສົງ, ບັນຫາສັງຄົມ, ໄພພິບັດທຳມະຊາດ ແລະ ການແຜ່ລະບາດຂອງໂລກພະຍາດສາມາດເປັນໄພຄຸກຄາມຕໍ່ການຂະຫຍາຍຕົວຂອງຂະແໜງທ່ອງທ່ຽວ. ປະເທດທີ່ມີແຫຼ່ງທ່ອງທ່ຽວທີ່ມີຄຸນະພາບສູງ, ພື້ນຖານໂຄງລ່າງ ແລະ ການສົ່ງເສີມການຕະຫຼາດ ມີຄວາມພ້ອມຫຼາຍກວ່າສາມາດດຶງດູດນັກລົງທຶນຫຼາຍກວ່າ. ພື້ນຖານໂຄງລ່າງ ເຊັ່ນ ຖະໜົນຫົນທາງ ແລະ ໄຟຟ້າ ຍັງຄົງຂາດແຄນໃນບາງຂົງເຂດ ແລະ ແຫຼ່ງທ່ອງທ່ຽວຫຼາຍແຫ່ງ ຍັງຄົງບໍ່ໄດ້ຮັບການພັດທະນາ. ນອກຈາກນີ້, ສປປ ລາວ ຍັງມີຂີດຈຳກັດໃນການສ້າງສິ່ງອຳນວຍຄວາມສະດວກ ເພື່ອຕອບສະໜອງຄວາມຕ້ອງການ ຈາກຜູ້ບໍລິໂພກໃນຕະຫຼາດຊ່ອງວ່າງ ຜູ້ທີ່ຕ້ອງການໄດ້ຮັບການບໍລິການທີ່ຫຼູຫຼາ ລະດັບໂລກ ຄືກັບປະເທດເພື່ອນບ້ານ ເຊັ່ນ ໄທ ແລະ ຈີນ.

ສຳລັບດ້ານການສະໜອງ, ພື້ນຖານໂຄງລ່າງທີ່ບໍ່ພຽງພໍ (ໂດຍສະເພາະ ການຂົນສົ່ງ) ແລະ ການຂາດຊັບພະຍາກອນມະນຸດທີ່ຊຳນານ ຖືກລະບຸວ່າເປັນອຸປະສັກໃນປະຈຸບັນ (ໄລຍະສັ້ນ) ຕໍ່ການພັດທະນາຂະແໜງທ່ອງທ່ຽວຂອງລາວ. ຄວາມຫ່ວງໃຍຕໍ່ບັນຫາທັກສະ ແລະ ການສຶກສາ ແມ່ນເຫັນໄດ້ຈະແຈ້ງໃນບໍລິສັດທ່ອງທ່ຽວ ຫຼາຍກວ່າ ໃນຂະແໜງອຸດສາຫະກຳອື່ນ. ການສຳຫຼວດສະພາບແວດລ້ອມ ການລົງທຶນໂດຍທະນາຄານພັດທະນາອາຊີ ໃນປີ 2005 ເພື່ອວິໄຈຂໍ້ຈຳກັດຕົ້ນຕໍທີ່ປະສົບໂດຍບໍລິສັດເອກະຊົນໃນຂະແໜງທ່ອງທ່ຽວ ພົບວ່າ ປະມານ 45% ຂອງບໍລິສັດທີ່ໄດ້ຮັບການສຳຫຼວດເຫັນວ່າ ພື້ນຖານໂຄງລ່າງເປັນຂໍ້ຈຳກັດອັນສຳຄັນທີ່ສຸດໃນຂະແໜງທ່ອງທ່ຽວ.

**ກາລະໂອກາດ:**

ການສຶກສາພົບວ່າ ຂະແໜງທ່ອງທ່ຽວຂອງລາວ ມີກາລະໂອກາດຫຼາຍປະການ. ທາງດ້ານດ້ານຄວາມປະສົງ, ສປປ ລາວ ເປັນທີ່ຮັບຮູ້ໂດຍທົ່ວໄປວ່າເປັນ "ອັນຍະມະນີແຫ່ງແມ່ຂອງ" ແລະ ຈະດຶງດູດນັກທ່ອງທ່ຽວ ເພື່ອມາທ່ອງທ່ຽວ ສະຖານທີ່ອັນສະຫງົບພ້ອມດ້ວຍຄວາມງົດງາມທາງທຳມະຊາດ ແລະ ວັດທະນະທຳ ໃນຂົງເຂດອຸດສາຫະກຳທີ່ກຳລັງເພີ່ມທະວີຂຶ້ນ. ຊັບສິນທ່ອງທ່ຽວດ້ານວັດທະ ນະທຳ ແລະ ທຳມະຊາດຂອງ ສປປ ລາວ ໄດ້ສ້າງຄວາມສົນໃຈເປັນພິເສດຈາກນັກທ່ອງທ່ຽວ. ນອກຈາກນີ້, ເມື່ອປະເທດເຮົາໄດ້ກາຍເປັນສ່ວນໜຶ່ງ ຂອງສະມາຄົມພາກພື້ນ ແລະ ສາກົນ, ຍັງໄດ້ຮັບການສະໜັບສະໜູນ ແລະ ຜົນປະໂຫຍດ ຊຶ່ງເພີ່ມທະວີຄວາມຕ້ອງການດ້ານທ່ອງທ່ຽວ. ອີກດ້ານໜຶ່ງ ໃນດ້ານອຸປະທານ, ຊັບສິນການທ່ອງທ່ຽວດ້ານວັດທະນະທຳ ແລະ ທຳມະຊາດຂອງ ສປປ ລາວ ຫຼາຍແຫ່ງ ໄດ້ດຶງດູດນັກທ່ອງທ່ຽວ ໂດຍຜ່ານຮູບແບບການທ່ອງທ່ຽວໃໝ່ໆ ເຊັ່ນ: ການທ່ອງທ່ຽວແບບອະນຸລັກ.

ສຳລັບລະດັບການຈ້າງງານໃນປີ 2008, ອົງການທ່ອງທ່ຽວແຫ່ງຊາດ ຄາດຄະເນວ່າ ລາຍຮັບແຫ່ງຊາດ ຈາກການທ່ອງທ່ຽວ ຈະມີມູນຄ່າລວມ 290 ລ້ານໂດລາອາເມລິກາ. ໃນປີ 2004, ໄດ້ມີການຄິດໄລ່ວ່າ ສຳລັບ 23 ນັກທ່ອງທ່ຽວສາກົນໃດໆ ຈະສ້າງວຽກເຮັດເຕັມເວລາໃຫ້ໜຶ່ງຄົນ. ຖ້າອັດຕານີ້ຍັງຄົງໃຊ້ໄດ້ໃນອະນາຄົດ, ຈະການສ້າງວຽກເຮັດງານທຳໃຫ້ 666,000 ຄົນ ໃນປີ 2008 (ທາງກົງ 37,000 ຄົນ ແລະ ທາງອ້ອມ 639,000 ຄົນ). ພາຍໃນປີ 2010, ໂດຍຜ່ານການຄາດຄະເນຈຳນວນນັກທ່ອງທ່ຽວ, ການສ້າງວຽກເຮັດງານທຳ ທາງກົງໃນອຸດສາຫະກຳທ່ອງທ່ຽວ ຈະສູງເຖິງ 89,000 ຄົນ, ປະມານ 22% ຂອງກຳລັງແຮງງານ ທ່າແຮງໃໝ່ ຊຶ່ງຈະທົດແທນການສູນເສຍການຈ້າງງານໃນຂະແໜງຕັດຫຍິບ.

**ມາດຕະການທີ່ເປັນໄປໄດ້:**

ມີການຕອບຮັບທີ່ເປັນໄປໄດ້ຫຼາຍຢ່າງ ເພື່ອປັບປຸງຜົນການປະຕິບັດງານຂອງ ຂະແໜງການ. ເມື່ອມາຮອດບັນຫາກ່ຽວກັບການເຂົ້າສູ່ຕະຫລາດ ແລະ ການເຂົ້າສູ່ຂໍ້ມູນຂ່າວສານ, ແມ່ນ ປະກອບມີຫລາຍມາດຕະການ ຊຶ່ງຈັດລຽງຈາກ ການຈັດງານມະຫະກຳ

ການຄ້າ ແລະ ງານວາງສະແດງສິນຄ້າ ແລະ ການຈັດຕະຫລາດກາງຄືນ ສຳລັບ ຂາຍເຄື່ອງຫັດຖະກຳ ໃນບ່ອນທີ່ມີນັກທ່ອງທ່ຽວເຕົ້າໂຮມ ກັນ ຢູ່ຫລາຍ ເພື່ອເປັນການເຊື່ອມໂຍງເຄື່ອງຫັດຖະກຳເຂົ້າໃນ ຊຸມຊົນທີ່ມີພື້ນຖານກ່ຽວກັບການທ່ອງທ່ຽວ ໂດຍມີໂອກາດໃນການຂາຍໂດຍກົງ. ສຳລັບບັນຫາການເຂົ້າສູ່ແຫຼ່ງທຶນ, ຂໍ້ສະເໜີ ກວມເອົາການສ້າງພື້ນຖານໂຄງລ່າງ ໃນການບໍລິຫານການເງິນຈຸລະພາກ, ສົ່ງເສີມໃຫ້ມີການປ່ອຍເງິນກູ້ໄລຍະສັ້ນທີ່ມີເງື່ອນໄຂຄັດຕິດອັນສົມເຫດສົມຜົນ ແລະ ສ້າງຕັ້ງກອງທຶນກຸ່ມບ້ານເພື່ອໃຫ້ການອຸດໜູນແກ່ຜູ້ຜະລິດ ຫລື ລູກບ້ານ.
ຂໍ້ລິເລີ່ມກ່ຽວກັບປົກປ້ອງສິດທິສັບສິນທາງປັນຍາໃນຂັ້ນຕໍ່ໄປ ຄືດັ່ງການສົ່ງເສີມໃຫ້ມີການແຂ່ງຂັນ ລະຫວ່າງຜູ້ຜະລິດ ຫລື ຮັບຮອງເອົາ “ສິ່ງບົ່ງຊີ້ທາງດ້ານພູມສາດ” ຄວນໄດ້ຮັບການ ພິຈາລະນາ.
ສຳລັບການຝຶກອົບຮົມເພື່ອຍົກລະດັບດ້ານທັກສະ, ລັດຖະບານໂດຍຮ່ວມມືກັບ ຂະແໜງທຸລະກິດ ຄວນສ້າງຄວາມເຂັ້ມແຂງໃຫ້ແກ່ສູນຝຶກອົບຮົມທີ່ມີຢູ່ ຊຶ່ງມີການປັບປຸງຫຼັກສູດການສິດສອນ. ມີຄວາມຈຳເປັນເພື່ອສ້າງ ຄວາມຮັບຮູ້ກ່ຽວກັບຄວາມສຳ ຄັນຂອງການຝຶກອົບຮົມວິຊາຊີບ ກ່ຽວກັບວຽກງານຫັດຖະກຳ ໃຫ້ແກ່ນັກຮຽນທີ່ມີທ່າແຮງ, ເຊັ່ນດຽວກັນນັ້ນ ຄວນສະໜອງກ່ຽວກັບການສອບເສັງກ່ຽວກັບທັກສະ ແລະ ການຢັ້ງຢືນ ໃຫ້ແກ່ຜູ້ຜະລິດ ແລະ ໃຫ້ການຝຶກອົບຮົມ ກ່ຽວກັບວຽກທີ່ພົວພັນກັບ ການບໍລິການໃນການບໍລິຫານຄຸ້ມຄອງ ແລະ ໂຄສະນາ. ເພື່ອຕອບບັນຫາທີ່ກ່ຽວກັບຄຸນນະພາບ ໂດຍອີງໃສ່ມາດຕະຖານທີ່ຕ້ອງການ ໂດຍປະເທດຜູ້ນຳເຂົ້າ ແລະ ຂີດຄວາມສາມາດຂອງຜູ້ຜະລິດລາວເພື່ອໃຫ້ຖືກຕ້ອງຕາມມາດຕະຖານເຫຼົ່ານັ້ນ. ສຳລັບການເພີ່ມມູນຄ່າ ອຸດສາຫະກຳດັ່ງກ່າວ ຄວນຮັບຮອງເອົາການຫຸ້ມຫໍ່ ທີ່ຖືກຕ້ອງ ໂດຍມີເຄື່ອງໝາຍຊີ້ບອກ ກ່ຽວກັບສ່ວນປະກອບ, ແຫຼ່ງກຳເນີດຂອງສິນຄ້າ ແລະ ເຄື່ອງໝາຍການຄ້າ ທີ່ມີຮູບປະພັນທີ່ເປັນເອກະລັກຂອງແຕ່ລະແຂວງ ຫລື ທ້ອງຖິ່ນ.

## ຜົນກະທົບຂອງອຸດສາຫະກຳປຸງແຕ່ງອາຫານ ຕໍ່ການພັດທະນາເສດຖະກິດ ແລະ ການພັດທະນາມະນຸດ.

ຂະແໜງກະສິກຳ ປະກອບມີ 77 % ຂອງແຮງງານທັງໝົດໃນ ສປປ ລາວ ແລະ ປະກອບສ່ວນປະມານ 47 % ຂອງຍອດລວມລາຍໄດ້ແຫ່ງຊາດ. ໃນຕົ້ນປີ 2006, ມີສອງບໍລິສັດຕົ້ນຕໍທີ່ເຮັດການຜະລິດປຸງແຕ່ງຜັກ ແລະ ໝາກໄມ້ເພື່ອການສົ່ງອອກ, ແຕ່ວ່າຍັງມີໂອກາດໃຫ້ມີຫຼາຍບໍລິສັດເພີ່ມຕື່ມ ແລະ ທ່າແຮງໃນການສົ່ງອອກຍັງມີສູງ. ຜະລິດຕະພັນປຸງແຕ່ງຜັກແລະໝາກໄມ້ຈາກບໍລິສັດເຫຼົ່ານັ້ນ ມີທັງກວນໝາກໄມ້, ນ້ຳໝາກໄມ້, ສາລີອ່ອນກະປ໋ອງ, ໜໍ່ໄມ້, ໝາກມ່ວງ ແລະ ໝາກນັດ. ເກີນກວ່າ 90% ຂອງຜະລິດຕະພັນປຸງແຕ່ງເຫຼົ່ານັ້ນ ແມ່ນສົ່ງອອກໄປ ສະຫະພາບເອີຣົບ. ຜະລິດຕະພັນປຸງແຕ່ງຜັກ ແລະ ໝາກໄມ້ມີມູນຄ່າໄດ້ເພີ່ມຂຶ້ນ 118% ແລະ ປະລິມານ ເພີ່ມຂຶ້ນ 94%ໃນຊ່ວງ 5 ປີຜ່ານມາ.

## ການປະກອບສ່ວນຕໍ່ເສດຖະກິດ:

ສິນຄ້າສອງຊະນິດທີ່ສຳຄັນໃນ ຂະແໜງປຸງແຕ່ງອາຫານ ແມ່ນກາເຟ ແລະ ຊາ ເຖິງແມ່ນວ່າ ອຸດສາຫະກຳກາເຟລາວ ແມ່ນຂ້ອນຂ້າງຍັງນ້ອຍ, ແຕ່ກໍໄດ້ກາຍເປັນໜຶ່ງໃນ ຜະລິດຕະພັນ ສົ່ງອອກທີ່ສຳຄັນຕົ້ນຕໍ ແລະ ເປັນແຫຼ່ງລາຍຮັບເງິນຕາຕ່າງປະເທດຂອງ ສປປ ລາວ ຕັ້ງແຕ່ປີ 1990. ໃນຄວາມ ເປັນຈິງແລ້ວ, ກາເຟເປັນສິນຄ້າສົ່ງອອກອັນດັບທີກຂອງການສົ່ງອອກທັງໝົດ ໃນປີ 2004, ມີມູນຄ່າ 13.02 ລ້ານໂດລາ ໃນປີ 2004 ແລະ 9.6 ລ້ານໂດລາ ໃນປີ 2005. ຕະຫຼາດສົ່ງອອກຕົ້ນຕໍ ແມ່ນເອີຣົບ. ໃນຂະນະທີ່ຕະຫຼາດພາຍໃນສຳລັບ ຊາແມ່ນຍັງ ໜ້ອຍ, ຄວາມຕ້ອງການຕ່າງປະເທດ ແມ່ນມີການປ່ຽນແປງ ຢ່າງຕໍ່ເນື່ອງ. ການຜະລິດຊາລາວ ແມ່ນ 160 ໂຕນ ໃນປີ 2001 ແລະ ເພີ່ມຂຶ້ນເປັນ 180 ໂຕນໃນປີ 2004. ປະຈຸບັນນີ້ ມີບາງບໍລິສັດ ທີ່ຜະລິດຊາສຳລັບ ສະໜອງໃຫ້ກັບພາຍໃນ ແລະ ຕ່າງປະເທດ. ການສົ່ງອອກຊາຂອງ ສປປ ລາວ ແມ່ນໜ້າປະທັບໃຈ ດ້ວຍການ ເພີ່ມຂຶ້ນຂອງການສົ່ງອອກເກີນ 90%ຕໍ່ປີ ໃນຊ່ວງປີ 1999 ຫາ 2003.

ສະຖິຕິທີ່ມີຢູ່ຊີ້ໃຫ້ເຫັນວ່າ ຈຳນວນແຮງງານໃນການຜະລິດຂອງຂະແໜງປຸງແຕ່ງອາຫານ ເພີ່ມຂຶ້ນ 23 % ຈາກ 2,800 ຄົນ ໃນປີ 2003 ເຖິງ 3,400 ຄົນ ໃນປີ 2004. ມີການຄາດການວ່າຢ່າງໜ້ອຍສຸດ 90,000 ໜ້າວຽກ ໃນຂະແໜງກະສິກຳ ແມ່ນກ່ຽວຂ້ອງໂດຍກົງກັບອຸດສາຫະກຳປຸງແຕ່ງອາຫານ. ຂໍ້ມູນທີ່ມີ ສະແດງໃຫ້ເຫັນວ່າ ຢ່າງໜ້ອຍສຸດ 12,000 ຊາວກະສິກອນ ແມ່ນກ່ຽວຂ້ອງໃນການສະໜອງຜັກ ແລະ ໝາກໄມ້ ໃຫ້ກັບໂຮງງານ ປຸງແຕ່ງອາຫານ. ຜູ້ມີບົດບາດຕົ້ນຕໍ ແມ່ນຊາວກະສິກອນ ແລະ ພໍ່ຄ້າຄົນກາງຜູ້ທີ່ຊື້ ພືດຜັກຈາກຊາວກະສິກອນ ແລະ ຂາຍຕໍ່.

## ຂໍ້ຈຳກັດ:

ຂໍ້ຈຳກັດທາງດ້ານການສະໜອງ ແມ່ນຄືກັນກັບຂະແໜງການອື່ນໆ ຕົວຢ່າງ ການຂາດແຄນ ວັດຖຸດິບ, ຂາດການເຂົ້າເຖິງຂໍ້ມູນຕະຫຼາດ, ສິນເຊື່ອ, ທັກສະແຮງງານ ແລະ ການສຶກສາ, ການຂາດອຸດສາຫະກຳ ທີ່ສະໜັບສະໜູນກັນ. ອຸດສາຫະກຳປຸງແຕ່ງອາຫານປະເຊີນກັບສິ່ງທ້າທາຍ ເພື່ອໃຫ້ໄດ້ຕາມມາດຕະຖານສາກົນໃນການຢັ້ງຢືນວ່າເປັນຜະລິດຕະພັນອິນຊີ.

ທາງດ້ານຄວາມຕ້ອງການ, ຜູ້ຜະລິດຄົນລາວຖືກຈຳແນກ ເພາະວ່າ ສິນຄ້າຖືກໄລ່ອັດຕາພາສີປ່ຽນແປງ ຈາກຕະຫຼາດສາກົນ ໂດຍສະເພາະ ແມ່ນຈາກເອີຣົບ ແລະ ປະເທດອາຊຽນ, ເຖິງແມ່ນວ່າໄດ້ມີສັນຍາໃຫ້ ສິດທິພິເສດທາງດ້ານການຄ້າສະເພາະແລ້ວ.

### ກາລະໂອກາດ:

ຜະລິດຕະພັນອາຫານປຸງແຕ່ງ ມີທ່າແຮງໃນການເຂົ້າເຖິງຕະຫຼາດເອີຣົບ, ແລະ ສິ່ງສຳຄັນ ໃນການສະໜອງອາຫານເພື່ອສຸຂະພາບດີ ສາມາດເຮັດໄດ້ດີໃນຜູ້ຜະລິດພາຍໃນ ເມື່ອມີ ການຢັ້ງຢືນກ່ຽວກັບ ກະສິກຳອິນຊີ. ສປປ ລາວ ມີຊັບພະຍາກອນທຳມະຊາດຢ່າງຫຼວງຫຼາຍ ຊຶ່ງເປັນຂໍ້ ໄດ້ປຽບຢ່າງໜຶ່ງ. ຜ່ານການ ຂະຫຍາຍຂະແໜງປຸງແຕ່ງອາຫານ, ຊາວກະສິກອນໄດ້ຮັບປະກັນທາງດ້ານຕະຫຼາດສຳລັບພືດຜັກຂອງພວກ ເຂົາ, ລາຍໄດ້ປົກກະຕິ ແລະ ການຈ້າງງານທີ່ຖາວອນ. ຜົນທີ່ຕາມມາ ກໍຄືວ່າ ຊາວກະສິກອນຈະຍ້າຍຈາກ ການເຮັດສວນເພື່ອລ້ຽງຊີບ ມາເປັນການເຮັດສວນເພື່ອການຄ້າ, ປະເທດຈະໄດ້ຮັບປະໂຫຍດຈາກການສົ່ງອອກທີ່ເພີ່ມຂຶ້ນ ແລະ ການນຳເຂົ້າສິນຄ້າກະສິກຳທີ່ຫຼຸດລົງ, ແລະ ສິ່ງສຳຄັນທີ່ສຸດແມ່ນ ອຸດສາຫະກຳປຸງແຕ່ງອາຫານ ຈະປະກອບສ່ວນໃນການຫຼຸດຜ່ອນຄວາມທຸກຍາກ ແລະ ຂະຫຍາຍໂອກາດ ແລະທາງເລືອກໃຫ້ກັບຄອບຄົວ ໃນຊົນນະບົດ.

ຂະແໜງອຸດສາຫະກຳອາຫານປຸງແຕ່ງ ໃນ ສປປ ລາວ ຍັງຢູ່ໃນຂັ້ນຕົ້ນໆ, ແຕ່ມີທ່າແຮງສຳລັບການ ສົ່ງອອກ ແລະ ການຈ້າງງານທີ່ເພີ່ມຂຶ້ນໃນລະດັບສູງ. ໃນການຮັບຮູ້ບັນຫາດັ່ງກ່າວ, ລັດຖະບານໄດ້ລະບຸ ອຸດສາຫະກຳ ປຸງແຕ່ງອາຫານ ແລະ ເຄື່ອງດື່ມເປັນຂະແໜງການບຸລິມະສິດທີ່ຈະພັດທະນາ. ປະຈຸບັນນີ້, ການສົ່ງອອກ ຜະລິດຕະພັນອາຫານປຸງແຕ່ງ ແມ່ນມີພຽງແຕ່ບໍລິສັດຕົ້ນຕໍສອງສາມແຫ່ງເປັນຈຸດໜັກ. ເຖິງຢ່າງໃດກໍຕາມ, ຜູ້ສົ່ງອອກຂະໜາດນ້ອຍ ມີແນວໂນ້ມເພີ່ມຂຶ້ນ.

### ມາດຕະການທີ່ເປັນໄປໄດ້:

ສຳລັບການສະໜອງວັດຖຸດິບທີ່ບໍ່ພຽງພໍ, ການສຶກສາສະເໜີການສ້າງສັນຍາ ກັບຊາວກະສິກອນໃນເງື່ອນໄຂທີ່ເປັນ ປະເທດທັງສອງຝ່າຍ, ຊາວນາ ແລະ ບໍລິສັດປຸງແຕ່ງອາຫານ, ພ້ອມທັງການໃຫ້ຄວາມຊ່ວຍເຫຼືອທາງດ້ານວິຊາການ ແກ່ຊາວກະສິກອນເພື່ອຮັບປະກັນການປູກພືດຜົນໄດ້ໃນສອງລະດູການ. ຄວນສ້າງຕັ້ງສະມາຄົມຊາວກະສິກອນ ເພື່ອສ້າງອຳນາດໃນການເຈລະຈາຂອງຊາວກະສິກອນ ແລະ ຊຸກຍູ້ໃຫ້ມີການເພາະປູກເພີ່ມຂຶ້ນ, ການຄົ້ນຄວ້າວິໄຈ ແລະ ການພັດທະນາ. ການສຳປະທານດິນຄວນໃຫ້ກັບ ບໍລິສັດປຸງແຕ່ງອາຫານ.

ສຳລັບການເຂົ້າເຖິງຂໍ້ມູນຕະຫຼາດ, ແນວຄິດລິເລີ້ມທີ່ສະເໜີ ໂດຍຄະນະຄົ້ນຄວ້າ ແລະ ວິໄຈ ອ້າງເຖິງການສ້າງ ຄວາມ ເຂັ້ມແຂງໃນການຮ່ວມມືລະຫວ່າງບັນດາກະຊວງການທີ່ກ່ຽວຂ້ອງ ແລະກຸ່ມຂອງຜູ້ຜະລິດໃນການແບ່ງ ປັນຂໍ້ມູນຕະຫຼາດ, ຂະຫຍາຍຕາໜ່າງຂອງກຸ່ມປຸງແຕ່ງຜະລິດຕະພັນກະສິກຳລາວ ໂດຍໃຫ້ມີ ບໍລິສັດປຸງແຕ່ງອາຫານຫຼາຍຂຶ້ນ, ປັບປຸງການສື່ສານ ແລະ ການມີສ່ວນຮ່ວມຂອງຜູ້ຜະລິດໃນງານວາງສະແດງສິນຄ້າ ລະດັບຊາດແລະ ສາກົນ. ສຳລັບການເຂົ້າເຖິງສິນເຊື່ອສຳລັບກະສິກຳ, ຄວນໃຫ້ເປັນອັດຕາດອກເບ້ຍຕ່ຳກວ່າການລົງທຶນທຸ ລະກິດອື່ນ ແລະໂຄງການການເງິນຈຸລະພາກໃຫ້ມີການຈັດຕັ້ງ ປະຕິບັດທົ່ວປະເທດ.

ສຳລັບບັນຫາທັກສະ ແລະ ການສຶກສາ, ບົດສຶກສາພົບວ່າ ໂຮງຮຽນວິຊາຊີບໄດ້ສອນຫຼັກສູດ ທີ່ກ່ຽວຂ້ອງແຕ່ ການປຸງແຕ່ງອາຫານ, ໃນຂະນະທີ່ ການຝຶກອົບຮົມເລື່ອງອະນາໄມໃນໂຮງງານຄວນໄດ້ຮັບການຊຸກຍູ້ຕື່ມ. ໂຮງງານຄວນຈັດຕັ້ງການຝຶກອົບຮົມດ້ວຍຕົນເອງ. ສຳລັບການຂາດອຸດສາຫະກຳສະໜັບສະໜູນກັນ, ໄດ້ມີ ການສະເໜີວ່າ ຄວນໃຫ້ມີການຜະລິດສິນຄ້າຂັ້ນກາງເຊັ່ນ: ກະປ໋ອງ, ຂວດ, ຖົງ, ກັບ ແລະ ກາສິນຄ້າເພີ່ມຂຶ້ນ ໂດຍການສະໜັບສະໜູນໂຮງງານທີ່ມີຢູ່ ເພື່ອປັບປຸງ ຄຸນະພາບຂອງສິນຄ້າ, ແລະ ລັດຖະບານຄວນຊຸກຍູ້ສົ່ງເສີມ ການລົງທຶນໃນຂະແໜງນີ້. ການລົງທຶນພື້ນຖານໂຄງລ່າງສຳລັບການຂົນສົ່ງ, ຊົນລະປະທານ ແລະ ລະບົບບໍລິຫານນ້ຳ ແມ່ນຈຳເປັນ ແລະ ສຳລັບການຫຼຸດຕົ້ນທຶນຄ່າຂົນສົ່ງ, ຄະນະສຶກສາ ສະເໜີ ເສັ້ນທາງເລືອກໃນການຂົນສົ່ງເພື່ອການ ສົ່ງອອກ ເຊັ່ນ: ຜ່ານຫວຽດນາມ, ແລະ ການວິໄຈກ່ຽວກັບການອຳນວຍຄວາມສະດວກດ້ານການຄ້າ, ການສົ່ງເສີມໃຫ້ມີບັນ ຍາກາດການລົງທຶນສຳລັບນັກລົງທຶນໃນອຸດສາຫະກຳຂົນສົ່ງ, ແລະ ເພີ່ມເວລາໃນການປະຕິບັດງານ ທີ່ດ່ານພາສີ.

ສຳລັບບັນຫາມາດຕະຖານຄຸນະພາບ, ມາດຕະການທີ່ສະເໜີລວມມີ ການສ້າງຕັ້ງ ສູນລະບົບການຈັດ ລະດັບ ເປັນຄືກັບຈຸດອ້າງອີງສຳລັບມາດຕະຖານດ້ານລາຄາ, ແລະ ພະແນກແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງ ກະຊວງກະສິກຳ ແລະ ປ່າໄມ້ສຳລັບການຄວບຄຸມຄຸນະພາບ. ທ້າຍສຸດ, ໃນການສ້າງຄວາມໝັ້ນໃຈໃຫ້ກັບ ລູກຄ້າພາຍໃນ, ອີງໃສ່ການສັງເກດການວ່າຜະລິດຕະພັນອາຫານປຸງແຕ່ງຂອງລາວ ບໍ່ເປັນທີ່ນິຍົມໃນໝູ່ຄົນລາວ, ຊຶ່ງສາມາດສ້າງຈິດສຳນຶກໃຫ້ເພີ່ມຂຶ້ນໄດ້ ຮ່ວມກັນຜົນກະທົບທີ່ຄ້າຍຄືກັນກຸ່ມຜູ້ບໍລິໂພກ ທີ່ຮັບຜິດຊອບໃນການປົກປ້ອງສິດຂອງຜູ້ບໍລິໂພກ ແລະ ຮັບປະກັນຄວາມປອດໄພຂອງສິນຄ້າ.

## ສະຫຼຸບ

ການທ່ອງທ່ຽວມີບົດບາດສຳຄັນຫຼາຍຕໍ່ການພັດທະນາເສດຖະກິດ ແລະ ການສ້າງວຽກເຮັດງານທຳຢູ່ ສປປ ລາວ. ອຸດສາຫະກຳທ່ອງທ່ຽວ ສົ່ງຜົນກະທົບຕໍ່ເສດຖະກິດ ແລະ ຊຸມຊົນທ້ອງຖິ່ນ, ໂດຍສະເພາະ ແມ່ນການຫຼຸດຜ່ອນຄວາມທຸກຍາກ ແລະ ການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນຜ່ານການທ່ອງທ່ຽວ ແບບອານຸລັກ. ເຖິງແນວໃດກໍຕາມ, ຜົນປະໂຫຍດໃນອານາຄົດຂອງການທ່ອງທ່ຽວ ແມ່ນຂຶ້ນກັບກົນໄກ ຂອງການກະຈາຍຜົນປະໂຫຍດ ເຊັ່ນ (i) ຄວາມສາມາດໃນການຮັບຕ້ອນນັກທ່ອງທ່ຽວຫຼາຍປະເພດ, (ii) ການພັດທະນາແຫຼ່ງທ່ອງທ່ຽວ ແລະ (iii) ການພັດທະນາອຸດສາຫະກຳສະໜັບສະໜູນອື່ນໆ. ນອກນັ້ນ, ຂະແໜງທ່ອງທ່ຽວຍັງຕ້ອງການ ຊັບພະຍາກອນມະນຸດຢ່າງຫຼວງຫຼາຍ ໂດຍສະເພາະ ພະນັກງານເພດຍິງ. ເພື່ອໃຫ້ມີການສະໜອງແຮງງານທີ່ພຽງພໍ ສຳລັບ ຂະແໜງການນີ້, ມີຄວາມຕ້ອງການໃຫ້ມີການຮ່ວມມືກັນຫຼາຍຂຶ້ນກວ່າເກົ່າ ແລະ ໃຫ້ການສະໜັບສະໜູນຈາກພາກສ່ວນທີ່ມີສ່ວນຮ່ວມ. ເຖິງຢ່າງໃດກໍຕາມ, ການພັດທະນາອຸດສາຫະກຳທ່ອງທ່ຽວແມ່ນການລົງທຶນ ທີ່ມະຫາສານ ແລະ ມີຜົນກະທົບຕໍ່ຫລາຍອຸດສາຫະກຳການຜະລິດ.

ຂະແໜງຫັດຖະກຳ ໄດ້ຕິດພັນກັບວິຖີການດຳລົງຊີວິດຂອງຄົນລາວ. ການສ້າງຄວາມເຂັ້ມແຂງແກ່ແມ່ຍິງຫຼາຍຄົນ ແລະ ສ້າງທາງເລືອກສຳລັບແມ່ຍິງ ຍັງເພີ່ມຫຼາຍຂຶ້ນ , ເຖິງວ່າພວກເຂົາໃຊ້ເວລາດົນໃນການເຮັດເຄື່ອງ ຫັດຖະກຳ. ມັນໄດ້ສ້າງຜົນກຳໄລອັນດີ, ສ້າງວຽກເຮັດ ແລະ ສ້າງລາຍຮັບ ສຳລັບຜູ້ຜະລິດທ້ອງຖິ່ນ ແລະ ຜູ້ຂາຍ. ການເຕີບໂຕ ຂອງການສົ່ງອອກ ແລະ ກຳໄລ ສາມາດກາຍເປັນຈິງໄດ້ ຖ້າມີມາດຕະການເພື່ອແກ້ໄຂບັນຫາ ການສະໜອງ. ບັນຫາອື່ນປະກອບດ້ວຍອຸດສາຫະກຳສະໜັບສະໜູນບໍ່ພຽງພໍ ໂດຍສະເພາະ ການສະໜອງ ຂອງວັດຖຸດິບ, ການຈຳກັດການເຂົ້າສູ່ຕະຫຼາດ ແລະ ຂໍ້ມູນຂ່າວສານ, ຄວາມຕ້ອງການໃຫ້ຍົກລະດັບ ດ້ານທັກສະໃນຂັ້ນຕໍ່ໄປ ໂດຍການຈັດຝຶກອົບຮົມ ແລະ ການສຶກສາ, ຂີດຄວາມສາມາດທີ່ບໍ່ພຽງພໍ ແລະ ມາດຕະຖານຄຸນນະພາບ, ການຈຳກັດໃນການເຂົ້າ ສູ່ແຫຼ່ງທຶນ, ແລະ ບໍ່ມີສິດທິຊັບສິນທາງປັນຍາ.

ການສຶກສາ "ການແກ້ໄຂຜົນກະທົບຈາກການລົບລ້າງ ໂກຕາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ໃນ ສປປລາວ" ປະກອບດ້ວຍການສຶກສາສີ່ບົດ:

1. ການປະເມີນການພັດທະນາມະນຸດ ໃນ ສປປ ລາວ ພາຍຫຼັງສິ້ນສຸດສັນຍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ
2. ການສ້າງຄວາມຫຼາກຫຼາຍ ແລະ ການສ້າງມູນຄ່າເພີ່ມ
3. ການປະເມີນສະພາບແວດລ້ອມດ້ານນະໂຍບາຍການຄ້າ ແລະ ອຸດສາຫະກຳ ໃນ ສປປ ລາວ
4. ຍຸດທະ ສາດການເຈລະຈາ ການຄ້າ.

ອຸດສາຫະກຳປຸງແຕ່ງອາຫານຢູ່ ສປປ ລາວ ຍັງຄົງຢູ່ໃນຂັ້ນຕົ້ນ, ມີພຽງແຕ່ສອງ ສາມ ບໍລິສັດເທົ່ານັ້ນ. ທ່າແຮງ ໃນການຂະຫຍາຍຕົວຂອງການສົ່ງອອກ ແລະ ການຈ້າງງານ ຄາດວ່າຈະມີບັນດາບໍລິສັດໃຫຍ່ ແລະ ນ້ອຍ ແມ່ນມີທ່າອ່ຽງເພີ່ມຂຶ້ນ. ບາງສິນຄ້າເຊັ່ນ: ກາເຟ ແມ່ນມີຄວາມອ່ອນໄຫວຕໍ່ຜົນກະທົບພາຍນອກ, ແຕ່ເຫຼົ່ານັ້ນ ຈະກະທົບຕໍ່ຜູ້ຜະລິດລາຍໃຫຍ່ ຫຼາຍກວ່າ ຜູ້ຜະລິດລາຍນ້ອຍກວ່າ ທີ່ອີງຕາມ ຄວາມຕ້ອງການ ຂອງຕະຫຼາດ ຊ່ອງວ່າງ.

ສະຫລຸບແລ້ວ ທ່າອ່ຽງຂອງການພັດທະນາ ແລະ ແນວໂນ້ມໃນອານາຄົດຂອງແຕ່ລະຂະແໜງອຸດສາຫະກຳ ສາມຂະແໜງນີ້ໄດ້ສົ່ງຂໍ້ມູນອັນຈະແຈ້ງວ່າ ບັນດາອຸດສາຫະກຳທີ່ຖືກຄັດເລືອກນີ້ສະແດງໃຫ້ເຫັນທ່າແຮງ ໃນການພັດທະນາເສດຖະກິດ ແລະ ການພັດທະນາມະນຸດ. ເພື່ອເຮັດໃຫ້ທ່າແຮງເຫຼົ່ານີ້ກາຍເປັນຈິງ ມາດຕະ ການທີ່ເໝາະສົມ ແລະ ມາດຕະການຈາກພາກສ່ວນທີ່ມີສ່ວນຮ່ວມແມ່ນຈຳເປັນ.



ຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່ ສູນສະຖິຕິແຫ່ງຊາດ,
ຖະໜົນ ຫຼວງພະບາງ, ນະຄອນຫຼວງວຽງຈັນ, ສປປ ລາວ
*ໂທລະສັບ: +85621 214740, 242022,*
*nscp@etllao.com*
*www.nsc.gov.la*

ການສຶກສານີ້ ດຳເນີນໂດຍ ສູນສະຖິຕິແຫ່ງຊາດ ພາຍໃຕ້ການສະໜັບສະໜູນຂອງອົງການສະຫະປະຊາຊາດ ເພື່ອການພັດທະນາລະດັບ ພາກພື້ນ ປະຈຳ ໂຄລົມໂບ.